# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ມີຖຸນາ 2008 ( 06-22-2008 )

## ພລັງຂອງຄຳເວົ້າເຮັດໃຫ້ສລາດ:

**ຂໍ້ພຣະຄັມພີໃນບົດຮຽນ:** (ສຸພາສິດ 17:27-28; 18:20-21; 25:11-12; 26:20-22,28)

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຂ້ອຍບໍ່ຄວນເວົ້າຕາມໃຈ ແລະປ່ອຍໃຫ້ໄປຕຳຄົນອື່ນ?

**ຄວາມຈິງໃນພຣະຄັມພີ:** ເພາະວ່າຄຳເວົ້າມີພລັງອຳນາດ, ພຣະເຈົ້າຈຶ່ງຕ້ອງການໃຫ້ໄພ່ພົນຂອງພຣະອົງໃຊ້ຄຳເວົ້າທີ່ສ້າງຄວາມດີ ບໍ່ແມ່ນສ້າງຄວາມຊົ່ວ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ອຍທ່ານສະແດງຄວາມສລາດທີ່ມາຈາກພຣະເຈົ້າ ໃນການໃຊ້ຊີວິດປະຈຳວັນ, ດ້ວຍ:

- ການຮັບຮູ້ວ່າ ຄຳເວົ້າຂອງຕົນເອງມີພລັງອຳນາດທີ່ຊ່ວຍເສີມສ້າງ ຫລືທຳລາຍ, ແລະ
- ການສຳຣວດການໃຊ້ຄຳເວົ້າອັນຫລວງຫລາຍ ເພື່ອເປັນການອຸ້ມຊູຊຸກຍູ້ ແລະໃຫ້ຫລີກໃນການເວົ້າເພື່ອທຳລາຍ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ໃຫ້ໃຊ້ການດຳເນີນຊີວິດທີ່ສລາດທຸກໆ ວັນ
- ຂໍໃຫ້ນັກຮຽນເວົ້າເຣື່ອງປະສົບການສ່ວນຕົນຂອງຕົນສູ່ກັນຟັງວ່າຄຳເວົ້າແບບໃດທີ່ເປັນຄຳເວົ້າທີ່ເສີມສ້າງ ແລະຄຳເວົ້າແບບໃດທີ່ເຮັດໃຫ້ເຂົາເຈົ້າເຈັບປວດ. ໃນບົດຮຽນນີ້ຈະສອນພວກເຮົາໃຫ້ຄຳເວົ້າຂອງພວກເຮົາ ຢູ່ໃນຄຳທີ່ພຣະເຈົ້າຊົງພຣະປະສົງໃຫ້ເປັນຄຳເວົ້າທີ່ດີ ບໍ່ແມ່ນຄຳເວົ້າຊົ່ວ ໆ.

## 1. <u>ເລືອກຄຳເວົ້າຢ່າງລະມັດລະວັງ:</u> (ສຸພາສິດ 17:27-28)

- ຂໍໃຫ້ນັກຮຽນອາສາສະໝັກອ່ານ (ສຸພາສິດ 17:27-28)
- ຕາມຄຳກ່າວໄວ້ໃນພຣະທັມສຸພາສິດ 17:27-28 ເປັນການປຽບທຽບລະຫວ່າງຄົນສອງຄົນ. ໃຫ້ນັກຮຽນບອກຊື່ຂອງສອງຄົນນີ້ມາ "ເຊັ່ນຕົວຢ່າງ ທ້າວວິລລຽມ ເປັນຄົນສລາດ ແລະທ້າວຟເຣັດດີ ເປັນຄົນໂງ່" ແລ້ວສະແດງບົດບາດຂອງຊາຍທັງສອງນີ້ລອງເບິ່ງ.
- ຄຳຖາມ: ຊາຍສອງຄົນນີ້ແມ່ນໃຜໃນຈຳນວນສອງຄົນ ໃນພຣະທັມສຸພາສິດ 17:27-28 ນີ້ ໄດ້ເວົ້າເຖິງການສະແດງອອກຂອງເຂົາຢ່າງໃດແດ່?
- ທ້າທາຍນັກຮຽນໃຫ້ເຂົາເຈົ້າດຳເນີນຊີວິດຢ່າງມີແຜນການຢ່າງສລາດເໝືອນທ່ານວິລລຽມຜູ້ທີ່ມີຄວາມສລາດໃນການດຳຣົງຊີວິດຂອງເຂົາເຈົ້າ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 17:27-28)

1. ຜູ້ທີ່ຂຽນພຣະທັມສຸພາສິດໄດ້ພັນລະນາຄວາມແຕກຕ່າງຂອງຄົນທັງສອງນັ້ນວ່າຢ່າງໃດ?
2. ທ່ານໄດ້ສະແດງຕົວອອກຕາມແບບຢ່າງເໝືອນກັບຄົນໃດໃນສອງຄົນນັ້ນ?
3. ທ່ານຈະເຮັດແນວໃດເພື່ອຈະໄດ້ເປັນຄົນທີ່ມີຄວາມເຂົ້າໃຈ ມີຄວາມຮູ້ເໝືອນດັ່ງພຣະຄຳທີ່ກ່າວໄວ້ໃນສຸພາສິດ 17:27 ນັ້ນ?

## 2. <u>ໃຫ້ນັບຖືພລັງອຳນາດຂອງຄຳເວົ້າ:</u> (ສຸພາສິດ 18:20-21)

- ຂໍໃຫ້ນັກຮຽນອາສາສະໝັກອ່ານ ພຣະທັມ ສຸພາສິດ 18:20-21
- ມີຫລາຍທາງ ມີພລັງທີ່ສຳຄັນຫລາຍຢ່າງທີ່ເຂົາເຈົ້າເອົາມາເວົ້າຢູ່ໃນໂບດ
  ເຊັ່ນຕົວຢ່າງ: ບາງທີນັກຮຽນອາຈເວົ້າເຣື່ອງ ໂມງປຸກ, ໄດເປົ່າຜົມ, ໝໍ້ຕົ້ມກາເຟ, ຣົດ ແລະອື່ນໆ. ຖາມວ່າມີຈັກຄົນທີ່ໄດ້ເວົ້າເຣື່ອງສຳຄັນໃນການມາໂບດ. ຄຳເວົ້າຂອງພວກເຮົາມີພລັງຫລາຍ ແລະສາມາດເປັນການປົວແປງ ຫລື ເຮັດໃຫ້ເຈັດປວດໄດ້, ເປັນຜົນດີ ຫລືເປັນຜົນຮ້າຍຕໍ່ຊີວິດໄດ້ດ້ວຍ.
- ຈັດນັກຮຽນຈາກກຸ່ມໃຫຍ່ອອກມາເປັນກຸ່ມນ້ອຍແຕ່ລະກຸ່ມໃຫ້ສົນທະນາໃນພຣະທີ່ກ່າວໄວ້ໃນສຸພາສິດ 18:21 ເຖິງເຣື່ອງລີ້ນວ່າມີພລັງແຫ່ງຄວາມຕາຍຢ່າງໃດ. ທີ່ຜ່ານມາຄຳເວົ້າຂອງເຂົາເຈົ້າມີພລັງແນວໃດໃນຢູ່ໃນບ້ານ, ຢູ່ບ່ອນທຳງານ ແລະບ່ອນອື່ນໆ. ຫລັງຈາກນັ້ນໃຫ້ແຕ່ລະກຸ່ມກ່າວສລຸບເຣື່ອງທີ່ເຂົາເຈົ້າໄດ້ສົນທະນາ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 18:20-21)

1. ຜູ້ທີ່ຂຽນພຣະທັມສຸພາສິດໄດ້ພັລນາເຖິງເຣື່ອງລີ້ນວ່າແນວໃດ?
2. ລີ້ນໄດ້ມີພລັງສຳຄັນພິເສດແນວໃດແດ່?
3. ທ່ານຈະໃຊ້ພລັງອັນພິເສດຂອງທ່ານເພື່ອໃຫ້ເວົ້າແຕ່ຄຳດີໆ ແທນການເວົ້າຊົ່ວໄດ້ຢ່າງໃດ?

## 3. <u>ໃຫ້ໃຊ້ຄຳເວົ້າທີ່ດີ:</u> (ສຸພາສິດ 25:11-12)

- ຂໍໃຫ້ອາສາສະໝັກອ່ານພຣະທັມ ສຸພາສິດ 25:11-12 ແລະໃຫ້ອີກຜູ້ນຶ່ງອ່ານ ສຸພາສິດ 14:25; 15:1 ແລະ16:24 ທີ່ມີການກ່ຽວພັນກັນກັບບົດຮຽນນີ້. ແລ້ວ ທ້າທາຍນັກຮຽນໃຫ້ບອກລັກສະນະພິເສດການປາສັຍຂອງຜູ້ມີສະຕິປັນຍາທີ່ເວົ້າແຕ່ຄວາມຈິງຕາມບົດທີ (14:25), ສຸພາບອ່ອນໂຍນ (15:1) ຄວາມພໍໃຈ (16:24) ແລະຄວາມສລາດຫລັກແຫລມ (25:11-12)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ສຸພາສິດ 25:11-12)

1. ຄຳອຸປມາແບບໃດທີ່ຜູ້ຂຽນໄດ້ເອົາມາເວົ້າ ແລະຄຳຕຳນິຂອງຊາຍທີ່ມີສະຕິປັນຍາໄດ້ຍິນແລ້ວເຮັດແນວໃດ?
2. ຄຳອຸປມາທັງສອງຄຳນີ້ທ່ານໄດ້ມີໂອກາດເອົາມາໃຊ້ໃນການປາສັຍແລ້ວບໍ່?
3. ໃນທີ່ນີ້ທ່ານມີປັນຫາອັນໃດທີ່ທ່ານຕ້ອງການນຳມາແກ້ໄຂໃນການຕຳນິຢ່າງສລາດໄດ້? ຄື ການອະທິຖານທູນຂໍຕໍ່ພຣະເຈົ້າຢ່າງຖືກຕ້ອງຕາມນ້ຳພຣະທັຍຂອງພຣະເຈົ້າຫລືບໍ່?

4. **ໃຫ້ຫລີກຈາກການເວົ້າທີ່ເສັຽຫາຍ:** (ສຸພາສິດ 26:20-22,28)

- ຂໍໃຫ້ອາາສມັກອ່ານພຣະທັມ ສຸພາສິດ 26:20-22,28
- ໃຊ້ຄຳແຕ່ຄຳເວົ້າທີ່ເປັນປໂຍດ ແລະດ້ວຍຄວາມສລາດຫລັກແຫລມ, ເພາະຄຳເວົ້າສາມາດເຮັດໃຫ້ເກີດຄວາມເສັຽຫາຍໄດ້. ໃຫ້ນັກຮຽນຍົກຄຳເວົ້າທີ່ເປັນການທຳລາຍມາສາມຢ່າງ, ໃນພຣະຄຳເຫລົ່ານີ້ມີຄຳເວົ້າທີ່ເປັນອັນຕະລາຍທີ່ໃຊ້ຄື ຊຸບຊິບນິນທາ (26:20-22) ຈົ່ມ ຕຳໜິ (26:21) ແລະ ການຍົກຍ້ອງທີ່ບໍ່ຈິງໃຈ (26:28)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ສຸພາສິດ 26:20-22,28)

1. ສາມຄຳທີ່ເປັນພັຍອັນຕະລາຍສາມຢ່າງທີ່ຜູ້ຂຽນໄດ້ບັລຍາຍໄດ້ໃນຂໍ້ພຣະທັມດັ່ງກ່າວນີ້ແມ່ນຫຍັງແດ່?
2. ສະເພາະຊຸບຊິບນິນທາ, ເປັນການວິວາດຜິດຖຽງ ຫລືເປັນຄວາມບໍ່ຈິງໃຈນັບຖືແຕ່ເປັນການເອົາອົກເອົາໃຈເພື່ອບໍ່ໃຫ້ເປັນອັນຕະລາຍແກ່ຕົນຊື່ງ ບໍ່?
3. ທີ່ຜ່ານມາທ່ານໄດ້ພົບກັບຄວາມຫຍຸ້ງຍາກໃນການກ່າວໃນສິ່ງທີ່ເປັນອັນຕະລາຍທັງສາມຢ່າງນີ້ບໍ່? ທ່ານຈະຕ້ອງເຮັດສິ່ງໃດກ່ອນ ເພື່ອເປັນການຫລີກເວັ້ນຄຳເວົ້າທີ່ພາໃຫ້ເສັຽຫາຍນັ້ນ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ຄົນທີ່ມີສະຕິປັນຍາຮູ້ວ່າຈະເຮັດຢ່າງໃດເພື່ອຈະມີຄວາມຊຳນາໃນການຕິດຕໍ່ຄົບຄ້າສະມາຄົມທີ່ດີ.
- ຄົນທີ່ມີສະຕິປັນຍາຈະເລີ້ມຕົ້ນການຄົບຄ້າສະມາຄົມ ສື່ສານດ້ວຍຄວາມລະມັດລະວັງ ແລະຊັ່ງຊາໃນຄຳເວົ້າຂອງພວກເຮົາ.
- ການຄົບຄ້າສະມາຄົມຂອງຄົນມີສະຕິປັນຍາຈະມີພລັງແລະໜ້ານັບຖືໃນຄຳເວົ້າຂອງເຂົາ.
- ຄົນທີ່ມີສະຕິປັນຍາຈະເລືອກເອົາແຕ່ຄຳເວົ້າດີໆ ເປັນການຊ່ອຍເຫລືອ.
- ຄົນທີ່ມີສະຕິປັນຍາຈະຫລີກເວັ້ນການເວົ້າຊົ່ວທຸກປະເພດໃນການປາກເວົ້າຂອງເຂົາ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )